ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ເລກທີ........../ຈຂ.ອປ

ອັດຕະປື, ວັນທີ................

# ບົດບັນທຶກ

## ກອງປະຊຸມອົງການປົກຄອງແຂວງ ປະຈຳເດືອນ 11 ປີ 2016

ກອງປະຊຸມ ອົງການປົກຄອງແຂວງ ປະຈຳເດືອນ 11 ປີ 2016 ໄດ້ດຳເນີນໃນຕອນເຊົ້າຂອງວັນທີ 21/11/2016 ທີ່ຫ້ອງປະຊຸມສຳນັກງານປົກຄອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ນາມ ວິຍະເກດ ເຈົ້າແຂວງອັດຕະປື ແລະ ມີບັນດາທ່ານຮອງເຈົ້າແຂວງ, ຫົວໜ້າ-ຮອງພະແນກການ, ຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ ເຂົ້າຮ່ວມທັງ ໝົດ 35 ຄົນ, ເພດຍິງ 2 ຄົນ.

ກອງປະຊຸມໄດ້ມີການລາຍງານ ແລະ ພ້ອມກັນຄົ້ນຄວ້າປຶກສາຫາລື ໃສ່ວຽກງານການອອກໃບຕາດິນເຂດສະໜາມບິນເກົ່າ ແລະ ບັນຫາອື່ນໆ ກ່ຽວກັບທີ່ດິນຈຳນວນໜຶ່ງ, ວຽກງານຈຸດສຸມ ກ່ຽວກັບນະໂຍບາຍ ແລະ ກົນໄກປະສານງານ ເພື່ອຊຸກຍູ້ສົ່ງເສີມເສດຖະກິດຕະຫຼາດແບບຍືນຍົງ, ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ບັນຫາຂໍ້ຂ້ອງໃຈ, ການສະເໜີຕ່າງໆ ຂອງປະຊາຊົນຕໍ່ການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງ.

ຜ່ານການຄົ້ນຄວ້າປຶກສາຫາລື ແລະ ການປະກອບຄວາມຄິດຄວາມເຫັນ ຢ່າງກົງໄປກົງມາ, ຈຶ່ງຕົກລົງເປັນເອກະພາບກັນ ເພື່ອສືບຕໍ່ການແກ້ໄຂ ແລະ ຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ກ່ຽວກັບວຽກງານຂ້າງເທິງ ດັ່ງນີ້:

1/. ກ່ຽວກັບວຽກງານທີ່ດິນ:

- ການລົງວັດແທກເນື້ອທີ່ດິນແຕ່ລະຄັ້ງ ຕ້ອງມີເຄື່ອງມືຮັບໃຊ້, ມີນິຕິກຳ ແລະ ເອກະສານຄູ່ມືຄົບຊຸດ ຕິດພັນກັບການສຶກສາອົບຮົມນຳພາແນວຄິດ ເພື່ອເຜີຍແຜ່ເຊື່ອມຊຶມໃຫ້ທຸກພາກສ່ວນກ່ຽວຂ້ອງຮັບຮູ້ເຂົ້າໃຈ, ເປັນເອກະພາບ ແລະ ເປັນຜູ້ຮ່ວມມືຈັດຕັ້ງປະຕິບັດ ຕາມລະບຽບການ ໃຫ້ສຳເລັດຢ່າງຖືກຕ້ອງ, ມີຄວາມສະເໝີພາບ ແລະ ມີຄວາມຍຸຕິທຳ. ສຳລັບບັ້ນເຜີຍແຜ່ເຊື່ອມຊຶມ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ກຳລັງ ປກຊ-ປກສ ແຂວງ ມອບໃຫ້ຫ້ອງວ່າການແຂວງ ຈັດວາລະໃຫ້ການນຳເປີດກອງປະຊຸມ ເພື່ອເຜີຍແຜ່ເຊື່ອມຊຶມ, ໂດຍອາດໃຊ້ເວລາໃນຊ່ວງເດືອນ 12 ປີ 2016 ຫຼື ຕາມເຫັນສົມຄວນ, ສ່ວນເນື້ອໃນ ແລະ ເອກະສານກ່ຽວຂ້ອງ ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ຮັບຜິດຊອບກະກຽມ.
- ສຳລັບການອອກໃບຕາດິນໃນເຂດເດີ່ນບິນເກົ່າ: ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນເອກະພາບກັນກ່ຽວກັບຮູບການໃນການຄອບຄອງນຳໃຊ້ ແລະ ລາຄາການໃນການຊຳລະສະສາງເປັນອັນລະອຽດ, ແລ້ວຈຶ່ງນຳສະເໜີຂັ້ນເທິງພິຈາລະນາອະນຸມັດ. ສຳລັບໂລດິນ ຂອງບໍລິສັດ ຮອນດາ ແລະ ບໍລິສັດຂອງທ້າວ ບັນນະວົງ ມອບໃຫ້ພະແນກການເງິນແຂວງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສົມທົບກັບພາກສ່ວນກ່ຽວຂ້ອງ ໃຫ້ໂອກາດເຈລະຈາມາຊຳລະສະສາງໄດ້ອີກ 1 ຄັ້ງ ແລະ ປະກອບເອກະສານອະນຸຍາດຕາມລະບຽບການ.
- ກ່ຽວກັບການແກ້ໄຂຄ່າຊົດເຊີຍຈາກຜົນກະທົບບັນຫາທີ່ດິນຕ່າງໆ ມອບໃຫ້ຄະນະຮັບຜິດຊອບ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການພິຈາລະນາປະຕິບັດຕາມລະບຽບການ, ຖ້າເປັນໄປບໍ່ໄດ້ແມ່ນໃຫ້ປະຕິບັດ ຕາມກົດໝາຍ.

- ກ່ຽວກັບການອອກໃບຕາດິນໃນເຂດຈຸດສຸມທົດລອງ ໃນ 4 ບ້ານນັ້ນ: ມອບໃຫ້ຄະນະວິຊາການ ກວດກາດ້ານຂໍ້ມູນຕົວຈິງ, ເກັບກຳໃຫ້ໄດ້ບັນຫາຂໍ້ຂ້ອງໃຈຕ່າງໆ, ຊອກໃຫ້ໄດ້ສາເຫດ-ເຫດຜົນຂອງບັນຫາຕົ້ນຕໍແນວໃດມີແນວໃດ? ຫຼັງຈາກນັ້ນ ຈຶ່ງມີດກຳນົດແຜນດຳເນີນງານ ແລະ ຊອກວິທີການແກ້ໄຂໃຫ້ໄດ້.

2/. ແຜນການເຄື່ອນໄຫວຂອງຄະນະຊຸກຍູ້ເສດຖະກິດ: ເພື່ອເຮັດໃຫ້ເສດຖະກິດພາຍໃນແຂວງ ມີຄວາມເຂັ້ມແຂງ ຕາມທິດພັດທະນາແບບຍືນຍົງ; ເບື້ອງຕົ້ນ ເຫັນດີແຕ່ງຕັ້ງຄະນະຮັບຜິດຊອບຄັກແນ່, ໂດຍຕ້ອງໄດ້ມີການວາງກອບນະໂຍບາຍ ແລະ ກົນໄກເພື່ອຊຸກຍູ້ສົ່ງເສີມ ໃຫ້ເປັນຮູບປະທຳ; ພ້ອມກັນນີ້ ບັນດາພະແນກບກົມກອງຕ່າງໆ ຕ້ອງຫັນເປັນແຜນຍຸດທະສາດ, ເປັນແຜນການ, ໂຄງການ ແລະ ກິດຈະກຳ ເພື່ອຊຸກຍູ້ສົ່ງເສີມເປັນອັນລະອຽດຕື່ມ ເພື່ອພັກດັນໃຫ້ການຜະລິດ ໃຫ້ເປັນສິນຄ້າຢ່າງມີຈຸດສຸມ, ເປັນພື້ນຖານທີ່ໝັ້ນຄົງ ແລະ ປະກອບສ່ວນເຂົ້າໃນການພັດທະນາຕາມທິດແບບຍືນຍົງ.

3/. ວຽກງານການພົວພັນກັບຕ່າງປະເທດ:

- ສືບຕໍ່ພົວພັນຮ່ວມມືກັບບັນດາປະເທດ ແລະ ບັນດາແຂວງຕ່າງໆ ທີ່ໄດ້ມີການເຊັນສັນຍາ ແລະ ການຮ່ວມມືຜ່ານມາໃຫ້ມີປະສິດທິຜົນ. ໃນຕໍ່ໜ້ານີ້ ແຜນການຮ່ວມມືກັບບັນດາແຂວງຂອງ ສສ ຫວຽດນາມ ຕ້ອງໄດ້ສະເໜີຜ່ານຄະນະກຳມາທິການເສດຖະກິດ ຮ່ວມມື ລາວ-ຫວຽດນາມ ທີ່ຕັ້ງຢູ່ກະຊວງແຜນການ ແລະ ການລົງທຶນ ຮັບຮູ້ຢ່າງເປັນທາງການ.

- ມອບໃຫ້ພະແນກການຕ່າງປະເທດ ຂຶ້ນແຜນກະກຽມຂອງຕ້ອນ-ຂອງຝາກເປັນອັນລະອຽດໃນແຕ່ລະປີ; ໃນນີ້ ໃນເວລາພົບປະຢ້ຽມຢາມແຕ່ລະຄັ້ງ ຫຼື ໃນວັນສຳຄັນຕ່າງໆຂອງພັກ-ຂອງຊາດ ( ຂອງ ສສ ຫວຽດນາມ ) ຕ້ອງໄດ້ມີການພົບປະຢ້ຽມຢາມ ແລະ ມອບຂອງຕ້ອນຂອງຝາກ ເຊິ່ງກັນ ແລະ ກັນເປັນປົກກະຕິ, ໂດຍໃຫ້ຄົ້ນຄວ້າເອົາຜະລິດຕະພັນ ຫຼື ສິ່ງຂອງທີ່ເປັນເອກະລັກ ແລະ ເປັນການຜະລິດຂອງປະຊາຊົນທີ່ແຂວງສາມາດເຮັດໄດ້.

- ສຳລັບການແບ່ງວຽກຂອດການພົວພັນ ລະຫວ່າງພະແນກການຕ່າງປະເທດ ແລະ ພະແນກແຜນການ-ການລົງທຶນແຂວງ ມອບໃຫ້ 2 ພາກສ່ວນປະສານກັນລະອຽດ, ແລ້ວແຈ້ງໃຫ້ແຂວງຮັບຊາບຕື່ມ; ໃນນີ້ ໃຫ້ພະແນກການຕ່າງປະເທດແຂວງ ກວດກາຄືນຂໍ້ຕົກລົງຕ່າງໆ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວຂອງຊ່ຽວຊານ ແລະ ໂຄງການຊ່ວຍເຫຼືອຕ່າງໆ ເຊັ່ນ: INGOs...

**4/. ກ່ຽວກັບຄຳຄິດເຫັນ, ຂໍ້ຂ້ອງໃຈ ແລະ ຄຳສະເໜີຕ່າງໆ ຂອງປະຊາຊົນ:**

ເຫັນດີຮັບຮອງເອົາຄຳຄິດຄຳເຫັນ, ຂໍ້ຂ້ອງໃຈ ແລະ ການສະເໜີຕ່າງໆຂອງປະຊາຊົນ ເພື່ອສືບຕໍ່ນຳໄປແກ້ໄຂ. ວຽກນີ້ ມອບໃຫ້ແຕ່ລະພະແນກການ-ກົມກອງທີ່ມີສ່ວນກ່ຽວຂ້ອງ ຕ້ອງໄດ້ເອົາໃຈໃສ່ເຂົ້າໃນການຈັດຕັ້ງປະຕິບັດການແກ້ໄຂເຂົ້າໃນໜ້າທີ່ວຽກງານຂອງຕົນ ຢ່າງຈິງຈັງ ແລະ ໃນຕໍ່ໜ້ານີ້ ໃຫ້ສົມທົບກັບຄະນະເລຂາທິການສະພາປະຊາຊົນແຂວງ ໃນເວລາລົງພົບປະຊາຊົນ ຕ້ອງໄດ້ຊີ້ນຳ-ນຳພາ ຕິດພັນກັບການເຮັດວຽກງານແນວຄິດ ແລະ ຊີ້ແຈງ ເພື່ອໃຫ້ປະຊາຊົນຮັບຮູ້ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານໃຫ້ມີຜົນສຳເລັດ.

ກອງປະຊຸມ ໄດ້ປິດໃນຕອນແລງຂອງວັນດຽວກັນ; ສະນັ້ນ ຈຶ່ງສ້າງເປັນບົດບັນທຶກສະບັບນີ້ ເພື່ອເປັນຫຼັກຖານບ່ອນອີງໃນການຈັດຕັ້ງປະຕິບັດ.

| | |
|---|---|
| ເຈົ້າແຂວງ<br>ປະທານກອງປະຊຸມ | ຜູ້ບັນທຶກ |
| ດຣ.ນາມ ວິຍະເກດ | ທະນູໄຊ ບັນຊາລົດ |